ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------- 00000 ----------

ກະຊວງການເງິນ ເລກທີ: 4337 /ກງ.ກສອ.

ກົມສ່ວຍສາອາກອນ ນະຄອນຫຼວງວຽງຈັນ, ວັນທີ 08 MAY 2014

# ແຈ້ງການ

**ເຖິງ:** ຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ ແລະ ຜູ້ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ.

**ເລື່ອງ:** ການສະເໜີຂໍຄືນເງິນອາກອນມູນຄ່າເພີ່ມ ສຳລັບບໍລິສັດສົ່ງສິນຄ້າອອກໄປຕ່າງປະເທດ.

- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເລກທີ 04/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເລກທີ 270/ນຍ, ລົງວັນທີ 18 ກັນຍາ 2009.

ເພື່ອເຮັດໃຫ້ການສະເໜີຂໍຄືນເງິນອາກອນມູນຄ່າເພີ່ມ ຖືກຕ້ອງຕາມລະບຽບກົດໝາຍ, ກົມສ່ວຍສາອາກອນ ຂໍແຈ້ງມາຍັງທ່ານຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ ແລະທ່ານຜູ້ອຳນວຍການບໍລິສັດຊາບ ກ່ຽວກັບຂັ້ນຕອນການຂໍຄືນເງິນອາກອນມູນຄ່າເພີ່ມ ທີ່ຕິດພັນກັບການສົ່ງສິນຄ້າອອກໄປຕ່າງປະເທດ ເລີ່ມແຕ່ເດືອນ ມີນາ 2014 ເປັນຕົ້ນໄປ ໃຫ້ຜູ້ດຳເນີນທຸລະກິດຢູ່ໃນລະບົບອາກອນມູນຄ່າເພີ່ມ ທີ່ມີຈຸດປະສົງຂໍຄືນເງິນອາກອນມູນຄ່າເພີ່ມ ຕ້ອງໄດ້ສົ່ງໃບສະເໜີຂໍຄືນເງິນອາກອນມູນຄ່າເພີ່ມເຖິງຂະແໜງສ່ວຍສາອາກອນ ຕາມທີ່ກຳນົດໄວ້ໃນມາດຕາ 24 ຂອງດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ເລກທີ 270/ນຍ, ລົງວັນທີ 18 ກັນຍາ 2008 ພ້ອມທັງຄັດຕິດຕາຕະລາງສັງລວມລາຍຮັບທຸລະກິດຈາກການສະໜອງຢູ່ພາຍໃນ ແລະສົ່ງອອກໄປຕ່າງປະເທດ ລວມທັງລາຍຮັບທຸລະກິດທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມ(ຖ້າມີ) ແລະ ຕາຕະລາງສັງລວມລາຍຈ່າຍຕິດພັນອາກອນມູນອາກອນມູນຄ່າເພີ່ມເບື້ອງສົ້ນເຂົ້າ ທີ່ບໍລິສັດສະເໜີຂໍຄືນ ລວມທັງຕາຕະລາງສັງລວມການນຳເຂົ້າສິນຄ້າຈາກຕ່າງປະເທດ(ຖ້າມີ) ໄປພ້ອມກັບໃບສະໜີດັ່ງກ່າວທຸກຄັ້ງ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມສ່ວຍສາອາກອນ

ພອງວັນ ບ່າວທຳມະວົງ